**ມິຊຊາອາທິດທີ 22 ກຳນົດທຳມະດາປີ C**

**ວັນທີ 01 ກັນຍາ 2019**



**ພຣະວໍລະສານໂດຍນັກບຸນລູກາ 14, 1, 7-14**

ໃນເວລານັ້ນ, ມື້ວັນເສົາໜຶ່ງ, ພຣະເຢຊູເຈົ້າສະເດັດເຂົ້າໃນເຮືອນຂອງຫົວໜ້າຟາຣີເຊວຜູ້ໜຶ່ງເພື່ອຮັບປະທານອາຫານ. ພວກຟາຣີເຊວພາກັນຊອມເບິ່ງພຣະອົງ. ເມື່ອພຣະອົງສັງເກດເຫັນພວກທີ່ໄດ້ຮັບເຊີນຫາເລືອກເອົາບ່ອນທີໜຶ່ງຈຶ່ງກ່າວເປັນຄວາມປຽບທຽບວ່າ:

ເມື່ອພວກທ່ານຖືກເຊີນໄປໃນງານວິວາຫະມຸງຄຸນ, ຈົ່ງຢ່າໄປນັ່ງບ່ອນທີໜຶ່ງ ຢ້ານວ່າອາດຍາມີຄົນມີຍົດກວ່າຖືກເຊີນມາໃນງານດ້ວຍ. ເຈົ້າພາບຜູ້ໄດ້ເຊີນທ່ານແລະຄົນນັ້ນຈະບອກກັບທ່ານວ່າ: ເຊີນຍົກທີ່ນັ່ງໃຫ້ທ່ານຜູ້ນີ້. ແລ້ວນັ້ນ, ທ່ານຈະຕ້ອງລົງໄປນັ່ງບ່ອນສຸດທ້າຍດ້ວຍຄວາມອັບອາຍ.

ດັ່ງນີ້, ເມື່ອທ່ານຖືກເຊີນ, ຈົ່ງໄປນັ່ງຢູ່ບ່ອນສຸດທ້າຍ. ເພື່ອວ່າເມື່ອເຈົ້າພາບມາພົບເຫັນຈະບອກວ່າ: ເຊີນທ່ານຂຶ້ນນັ່ງທາງເທິງເຖີດ. ແລ້ວທ່ານຈະໄດ້ຮັບກຽດຕໍ່ໜ້າພວກມາກິນລ້ຽງທັງຫລາຍ. ຍ້ອນວ່າຜູ້ໃດຍົກຕົວຂຶ້ນຈະຖືກຜາບລົງໃຫ້ຕ່ຳ. ແລະຜູ້ໃດຖ່ອມຕົວລົງຈະຖືກຍົກຂຶ້ນໃຫ້ສູງ.

ແລ້ວພຣະອົງກ່າວກັບຟາຣີເຊວຜູ້ເຊີນພຣະອົງວ່າ: ເມື່ອເຈົ້າຈັດງານລ້ຽງຕອນທ່ຽງຫລືຕອນແລງກໍຕາມ, ຢ່າເຊີນແຕ່ມິດສະຫາຍ, ອ້າຍນ້ອງວົງວານຫລືໝູ່ກອງຜູ້ຮັ່ງມີ ຢ້ານວ່າເຂົາຈະເຊີນເຈົ້າເປັນການຕອບແທນ. ກົງຂ້າມ, ເມື່ອເຈົ້າຈັດງານລ້ຽງຈົ່ງເຊີນເອົາແຕ່ຄົນທຸກຈົນ, ຄົນເປ້ຍ, ຄົນຂາເຄແລະຄົນຕາບອດເຖີດ. ດັ່ງນີ້, ເຈົ້າຈຶ່ງຈະມີບຸນຍ້ອນເຂົາເຫລົ່ານັ້ນບໍ່ສາມາດເຊີນເຈົ້າເປັນການຕອບແທນໄດ້. ແລ້ວເຈົ້າຈະໄດ້ຮັບລາງວັນເປັນການຕອບແທນໃນວັນກັບເປັນຄືນມາຂອງພວກຊອບທຳ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 14, 1, 7-14**

ຜູ້ຂຽນພຣະວໍລະສານມັກໃຊ້ຮູບພາບຂອງງານລ້ຽງເພື່ອບັນລະຍາຍເຖິງອານາຈັກສະຫວັນຫລືການປະທັບຢູ່ຂອງພຣະເຢຊູເຈົ້າທ່າມກາງພວກເຮົາ. ສິ່ງນີ້ພວກເຮົາເຫັນໄດ້ເມື່ອພຣະເຢຊູເຈົ້າເລີ່ມຕົ້ນການເທດສະໜາສັ່ງສອນ, ພຣະອົງໄດ້ຖືກເຊີນໄປງານວິວາຫະມຸງຄຸນຢູ່ບ້ານການາ, ແຂວງກາລີເລ. ແລະທ້າຍສຸດ, ພຣະອົງໄດ້ຈົບການເທດສອນໃນງານລ້ຽງອາຫານຄ່ຳຄັ້ງສຸດທ້າຍ. ໃນວັນນີ້, ພຣະກຣິສຕະຈັກກໍເຊື້ອເຊີນພວກເຮົາເຂົ້າຮ່ວມງານລ້ຽງຂອງພຣະຊຸມພານ້ອຍ ຜູ້ໄດ້ມອບພຣະອົງເອງເປັນເຄື່ອງບູຊາແລະເປັນອາຫານລ້ຽງວິນຍານພວກເຮົາອັນແມ່ນມະຫາບູຊາມິຊຊານັ້ນເອງ.

ຄຳເທດສອນຂອງພຣະເຢຊູເຈົ້າວັນນີ້ກໍຢູ່ໃນງານລ້ຽງທີ່ເຮືອນຂອງຫົວໜ້າຟາຣີເຊວຜູ້ໜຶ່ງ. ພຣະເຢຊູເຈົ້າສອນຜູ້ເປັນເຈົ້າພາບກໍຄືຜູ້ຖືກເຊີນວ່າ: ຈົ່ງຢ່າເລືອກບ່ອນນັ່ງ ແລະຢ່າເລືອກແຂກທີ່ມາໃນງານລ້ຽງ. ຄຳສອນທັງສອງຢ່າງນີ້ມີຄວາມກ່ຽວພັນກັນຢ່າງໃດ?

ຈົ່ງຢ່າເລືອກບ່ອນນັ່ງທີ່ມີກຽດເມື່ອເຈົ້າຖືກເຊີນ. ໝາຍຄວາມວ່າແນວໃດ? ໝາຍວ່າຈົ່ງມີຄວາມສຸພາບຖ່ອມຕົນ. ຄວາມສຸພາບຖ່ອມຕົນໃນທີ່ນີ້ບໍ່ແມ່ນການກົດດັນຕົວເອງ, ບໍ່ແມ່ນການຫລົບຫລີກຄົນອື່ນ, ບໍ່ແມ່ນການເປັນຄົນໜ້າໄຫວ້ຫລັງຫລອກ. ໃນພາສາລາວ, ພວກເຮົາມີຄຳສັບທີ່ມີຄວາມໝາຍໃນຕົວຂອງມັນເອງອັນແມ່ນ ຄວາມສຸພາບຖ່ອມຕົນ. ໝາຍວ່າຖ້າຢາກເປັນຄົນສຸພາບຕ້ອງຮູ້ຈັກຖ່ອມຕົນ. ການຖ່ອມຕົນໃນທີ່ນີ້ຄືການພ້ອມທີ່ຈະຮັບໃຊ້ຄົນອື່ນ. ແລະແບບຢ່າງອັນດີເລີດຂອງການຖ່ອມຕົນເພື່ອຮັບໃຊ້ນີ້ຄືອົງພຣະເຢຊູເຈົ້ານັ້ນເອງ. ພຣະອົງບໍ່ຫວງແຫນຄວາມສະເໝີພາບກັບພຣະເຈົ້າ, ແຕ່ພຣະອົງຖ່ອມຕົວລົງມາເພື່ອຮັບສະພາບມະນຸດຍົກເວັ້ນແຕ່ບາບ ເພື່ອນຳເອົາມະນຸດກັບຄືນເມືອຫາພຣະບິດາເຈົ້າ (ຟລ 2, 6-7).

ຈົ່ງຢ່າເລືອກແຂກທີ່ມາໃນງານລ້ຽງ. ໝາຍຄວາມວ່າແນວໃດ? ການທີ່ບໍ່ຈຳແນກແຂກທີ່ມາໃນງານລ້ຽງບໍ່ໝາຍວ່າພວກເຮົາຕ້ອງເຊີນໝົດທຸກຄົນໃນຄຸ້ມ,ໃນໜ່ວຍ, ໃນບ້ານໃຫ້ມາຮ່ວມງານລ້ຽງຢ່າງມ່ວນຊື່ນ. ແຕ່ຈົ່ງຄິດຫາຜູ້ທີ່ທຸກຍາກບໍ່ມີໂອກາດໄດ້ກິນແຊບນຸ່ງອຸ່ນ, ຜູ້ທີ່ສັງຄົມປະຖິ້ມ ແລະຜູ້ທີ່ບໍ່ມີໃຜຄິດຮອດຄິດເຖິງ. ເພາະເຂົາເຫລົ່ານັ້ນແມ່ນຮູບພາບຂອງພຣະເຈົ້າ. ແລະແບບຢ່າງຜູ້ທີ່ບໍ່ເລືອກແຂກມາຮ່ວມໃນງານລ້ຽງຄືພຣະເຢຊູເຈົ້ານັ້ນເອງ. ພຣະອົງມາໃນໂລກນີ້ເພື່ອຮຽກເອີ້ນທຸກຄົນບໍ່ວ່າຄົນດີຫລືຄົນຊົ່ວ, ບໍ່ວ່າຄົນສຸຂະພາບດີຫລືຄົນເຈັບປ່ວຍ, ທັງໝົດນີ້ລ້ວນແຕ່ຖືກເຊີນໃຫ້ມາຮ່ວມໃນງານລ້ຽງຂອງພຣະເຢຊູເຈົ້າ, ໃຫ້ມາມີສ່ວນໃນການກູ້ໄຖ່ຂອງພຣະອົງ ເພື່ອທຸກຄົນຈະໄດ້ຮອດແລະມີຊີວິດ.

ໃນວັນນີ້ກໍເຊັ່ນດຽວກັນ, ພຣະເຢຊູເຈົ້າສືບຕໍ່ເຊື້ອເຊີນພວກເຮົາໃຫ້ມາຮ່ວມໃນງານລ້ຽງຂອງພຣະຊຸມພານ້ອຍ. ເຖິງວ່າພວກເຮົາຈະເປັນຄົນບາບບໍ່ສົມຄວນທີ່ຈະຮັບພຣະອົງເຂົ້າມາໃນຈິດໃຈຂອງພວກເຮົາ. ແຕ່ຫາກພຣະອົງກ່າວຄຳດຽວເທົ່ານັ້ນ, ພວກເຮົາກໍຈະໄດ້ຮອດແລະມີຊີວິດຮ່ວມກັບພຣະອົງຕະຫລອດໄປ.

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ສຳນຶກເຖິງຄວາມຮັກແລະພຣະຄຸນທີ່ພຣະອົງມີຕໍ່ພວກເຮົາ ເພື່ອພວກເຮົາຈະໄດ້ມີຄວາມສຸພາບແລະພ້ອມທີ່ຈະຮັບໃຊ້ເພື່ອນພີ່ນ້ອງຂອງພວກເຮົາ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ